GSS

ມາດຕະຖານໂລກວ່າດ້ວຍຜູ້ຈັດສົ່ງ

# ຜູ້ຈັດສົ່ງທັງຫມົດຕ້ອງປະຕິບັດຕາມຂໍ້ກໍານົດລຸ່ມນີ້

HANES Brands Inc

## ວິທີປະຕິບັດກ່ຽວກັບການຈ້າງງານ

HanesBrands ມີຄວາມຕັ້ງໃຈອັນແຮງກ້າທີ່ຈະປະຕິບັດຕໍ່ພະນັກງານຢ່າງເປັນທໍາ, ດ້ວຍກຽດສັກສີ ແລະ ຄວາມເຄົາລົບ. ພວກເຮົາເຊື່ອໃນການດໍາເນີນທຸລະກິດກັບຜູ້ຈັດສົ່ງທີ່ມີຄວາມຕັ້ງໃຈອັນດຽວກັນ ນີ້.
ພວກເຮົາຕ້ອງການໃຫ້ຜູ້ຈັດສົ່ງປະຕິບັດຕາມກົດຫມາຍ ແລະ ລະບຽບການທີ່ກ່ຽວຂ້ອງທັງຫມົດ ແລະ ສະຫນັບສະນູນສິດທິມະນຸດພື້ນຖານ ຂອງທຸກຄົນ.

## ແຮງງານເດັກ:

ຜູ້ຈັດສົ່ງຈະບໍ່ຈ້າງບຸກຄົນຜູ້ທີ່ຝ່າຝືນເກນອາຍຸບັງຄັບເຂົ້າໂຮງຮຽນໃນທ້ອງຖິ່ນ ຫຼື ອາຍຸຕໍ່າກວ່າເກນອາຍຸເຮັດວຽກຕາມກົດຫມາຍໃນປະເທດບ່ອນທີ່ພວກເຂົາດໍາເນີນ ທຸລະກິດຢູ່.
ຍິ່ງໄປກວ່ານັ້ນ, ບໍ່ວ່າກໍລະນີໃດຫ້າມຜູ້ຈັດສົ່ງວ່າຈ້າງຜູ້ເຮັດວຽກທີ່ອາຍຸຕໍ່າກວ່າ 15 ປີ ຍົກເວັ້ນນັກສະແດງ ແລະ ນາຍແບບເດັກນ້ອຍທີ່ຖືກຈ້າງເຂົ້າໃນການໂຄສະນາ ຫຼື ວຽກງານສື່ ເຊິ່ງໄດ້ຮັບການປົກປ້ອງໂດຍເງື່ອນໄຂຂໍ້ກໍານົດກ່ຽວກັບແຮງງານເດັກ ທີ່ກ່ຽວຂ້ອງ.

## ການຊົດເຊີຍ:

ຜູ້ຈັດສົ່ງຈະປະຕິບັດຕາມກົດຫມາຍ ແລະ ລະບຜູ້ຈັດສົ່ງງດ້ວຍການຊົດເຊີຍທີ່ ກ່ຽວຂ້ອງ ລວມທັງລະບຽບການທີ່ກ່ຽວຂ້ອງກັບຄ່າແຮງຂັ້ນຕໍ່າ, ເງິນເພີ່ມໂມງ, ເງິນ ອຸດຫນູນ ແລະ ສິດຜົນປະໂຫຍດອື່ນໆ. ຜູ້ຈັດສົ່ງຕ້ອງຈ່າຍຄ່າຊົດເຊີຍຢ່າງຫນ້ອຍຕາມທີ່ກົດຫມາຍໄດ້ກໍານົດ ຫຼື ຄ່າ ຕອບແທນທາງອຸດສະຫະກໍາທົ່ວໄປ ອັນໃດກໍ່ໄດ້ທີ່ສູງກວ່າ.

HanesBrands ຮັບຮູ້ວ່າທຸກໆຄົນຜູ້ທີ່ເຮັດວຽກມີສິດໄດ້ຮັບການຊົດເຊີຍທີ່ເປັນທໍາ.

HanesBrands ຍັງຮັບຮູ້ອີກວ່າ ຄ່າຊົດເຊີຍທັງຫມົດ (ຄ່າແຮງ, ບວກກັບເງິນໂບ ນັດ ແລະ ສິດຜົນປະໂຫຍດທີ່ເປັນວັດຖຸ, ບໍ່ລວມເງິນເພີ່ມໂມງ) ຄວນຊ່ວຍໃຫ້ຜູ້ ເຮັດວຽກສາມາດຕອບສະຫນອງຄວາມຈໍາເປັນພື້ນຖານ ແລະ ມີລາຍໄດ້ຫຼົງອາກອນ ບາງຈໍານວນ. ພວກເຮົາສະຫນັບສະຫນູນຜູ້ຈັດສົ່ງໃຫ້ສະຫນອງການຊົດເຊີຍທີ່ເປັນທໍາໃນລະດັບດັ່ງ ກ່າວ. ບ່ອນໃດທີ່ບໍ່ເຮັດໄດ້ຕາມເປົ້າຫມາຍອັນນີ້ຜູ້ຈັດສົ່ງງຫນວງຕ້ອງຮ່ວມມືກັບພວກ ເຮົາເພື່ອດໍາເນີນການທີ່ເຫມາະສົມໃນການຂົນຂວາຍເພື່ອໃຫ້ບັນລຸໄດ້ລະດັບການ ຊົດເຊີຍດັ່ງກ່າວນັ້ນ.

## ການບໍ່ເລືອກປະຕິບັດ:

ຜູ້ຈັດສົ່ງຈະບໍ່ເລືອກປະຕິບັດໃນການວ່າຈຜູ້ຈັດສົ່ງງງງຊົດເຊີຍ, ຄວາມກ້າວຫນ້າ, ການ ປະຕິບັດວິໄນ, ການເລີກຈ້າງ ຫຼື ການອອກວຽກ ໂດຍອີງຕາມເຊື້ອຊາດ, ສີຜິວ, ເພດ, ຊາດກໍາເນີດ (ຫຼື ຊົນເຜົ່າ), ອາຍຸ, ສາສະຫນາ, ຄວາມພິການ, ຄວາມມັກຮັກທາງເພດ , ເອກະລັກເພດ, ສະຖານະການເປັນນັກຮົບເກົ່າ, ສະຖານະພາບຄອບຄົວ ແລະ ລັກສະນະ ຫຼື ຄວາມເຊື່ອອື່ນໆ ຂອງບຸກຄົນໃດຫນຶ່ງ .
HanesBrands ຈະສະຫນັບສະຫນູນບັນດາຜູ້ຈັດສົ່ງທີ່ໃຫ້ໂອກາດແກ່ທຸກຄົນຢ່າງ ເທົ່າທຽມ.

## ການບັງຄັບແຮງງານ:

ຜູ້ຈັດສົ່ງຈະບໍ່ນໍາໃຊ້ການບັງຄັບແຮງງານ ຫຼື ແຮງງານທີ່ບໍ່ສະຫມັກໃຈບໍ່ວ່າ ດ້ວຍການຜູກມັດ, ກັກຂັງ ຫຼື ຜູກມັດດ້ວຍສັນຍາ ລວມທັງການເປັນທາດຮັບ ໃຊ້ຍ້ອນເປັນຫນີ້.

### ອິດສະຫຼະພາບໃນການໂຮມຊຸມນຸມ ແລະ ການເຈລະຈາຕໍ່ລອງແບບລວມຫມູ່:

ຜູ້ຈັດສົ່ງຈະຮັບຮູ້ ແລະ ເຄົາລົບສິດທິ ຜູ້ຈັດສົ່ງງານໃນການໃຊ້ສິດ ຂອງ ເຂົາເຈົ້າກ່ຽວກັບການໂຮມຊຸມນຸມຢ່າງມີອິດສະຫຼະ.
ເຊັ່ນດຽວກັນ, ຜູ້ຈັດສົ່ງງຈະຮັບຮູ້ ແລະ ເຜູ້ຈັດສົ່ງດທິ ຂອງ ພະນັກງານ ໃນການເລືອກ ຫຼື ບໍ່ເລືອກທີ່ຈະເຈລະຈາຕໍ່ລອງແບບ ລວມຫມູ່.

## ຄວາມປອດໄພ ແລະ ສຸຂະພາບ:

ຜູ້ຈັດສົ່ງຈະຈັດຫາສະພາບແວດລ້ອມການເຮັດວຽກທີ່ດີ ແລະ ປອດໄພ ໃຫ້ແກ່ພະນັກງານ ຂອງຕົນ. ຜູ້ຈັດສົ່ງຕ້ອງໃຜູ້ຈັດສົ່ງທີ່ຈະລຶບລ້າງບໍ່ໃຫ້ມີການກະທໍາ ແລະ ເງື່ອນໄຂ ຕ່າງໆທີ່ບໍ່ປອດໄພ ເພື່ອປ້ອງກັນອັນຕະລາຍທີ່ຈະເກີດຕໍ່ພະນັກງານ, ລູກຄ້າ ແລະ ປະຊາຊົນທົ່ວໄປ ຂອງຕົນ. ເງື່ອນໄຂນີ້ຍັງໃຊ້ກັບສະຖານທີ່ຢູ່ອາໄສ ແລະ ບ່ອນກິນເຂົ້າທີ່ກ່ຽວຂ້ອງ

## ການຄຸກຄາມ ຫຼື ການລະເມີດໃນສະຖານທີ່ເຮັດວຽກ:

ຜູ້ຈັດສົ່ງງຈະບໍຜູ້ຈັດສົ່ງກງານໄດ້ຮັບການຄຸກຄາມທາງຮ່າງກາຍ , ວາຈາ , ເພດ ຫຼື ຈິດໃຈ ຫຼື ບໍ່ນໍາໃຊ້ການລົງໂທດທາງຮ່າງກາຍຕໍ່ພະນັກງານທີ່ ຖືກປະຕິບັດວິໄນ.

## ຊົ່ວໂມງເຮັດວຽກ:

ຜູ້ຈັດສົ່ງງຈະປະຕິບັດຕາມກົດຫມາຍ ແລະ ລະບຽບການທີ່ກ່ຽວຂ້ອງ ທັງຫມົດກ່ຽວກັບຊົ່ວໂມງເຮັດວຽກ.
ນອກຈາກສະຖານະການພິເສດ, ພະນັກງານຕ້ອງບໍ່ເຮັດວຽກເກີນຊົ່ວໂມງທີ່ກົດຫມາຍກໍານົດ ຫຼື ເກີນກວ່າ 48 ຊົ່ວໂມງປົກກະຕິບວກ ກັບລ່ວງເວລາ 12 ຊົ່ວໂມງຕໍ່ອາທິດ ອັນໃດກໍ່ໄດ້ທີ່ຕໍ່າກວ່າ. ຜູ້ຈັດສົ່ງຕ້ອງອະນຸຍາດໃຫ້ພະນັກງານພັກຜ່ອນ 24 ຊົ່ວໂມງຕິດຕໍ່ກັນ ພາຍຫຼັງ 6 ມື້ເຮັດວຽກລຽນຕິດ. ຕ້ອງບໍ່ມີການຮ້ອງຂໍໃຫ້ເຮັດວຽກລ່ວງເວລາເປັນປະຈໍາ ແລະ ຕ້ອງເຮັດ ແບບສະຫມັກໃຈ.

## ສິ່ງແວດລ້ອມ:

HanesBrands ເຊື່ອໃນການດໍາເນີນທຸະລກິດກັບຜູ້ຈັດສົ່ງງງທີ່ມີຄວາມຕັ້ງໃຈອັນດຽວກັນຮ່ວມກັນໃນການປົກປ້ອງສິ່ງແວດລ້ອມທີ່ມີຄຸນນະພາບໃນທົ່ວໂລກຜ່ານການຄຸ້ມຄອງສິ່ງແວດລ້ອມທີ່ດີ.
ຜູ້ຈັດສົ່ງຈະປະຕິບັດຕາມກົດຫມາຍ ແລະ ລະບຽບການຜູ້ຈັດສົ່ງງງິ່ງແວດລ້ອມທີ່ກ່ຽວຂ້ອງທັງຫມົດ ແລະ ຈະພັດທະນາ ແລະ ຈັດຕັ້ງປະຕິບັດແຜນວຽກ ຫຼື ແຜນງານ ຕ່າງໆຢ່າງທ່ວງທັນເພື່ອແກ້ໄຂທຸກການປະຕິບັດທີ່ບໍ່ສອດຄ່ອງໃຫ້ຖືກຕ້ອງ. ຜູ້ຈັດສົ່ງຈະພະຍາຍາມຫຼຸດຜ່ອນສິ່ງເສດເຫຼືອ ແຜູ້ຈັດສົ່ງເອົາມາດຕະການຢ່າງມີຄວາມຮັບຜິດຊອບໃນການຫຼຸດຜ່ອນ ແລະ ບັນເທົາຜົນກະທົບທາງສິ່ງແວດລ້ອມ ຈາກການດໍາເນີນງານຂອງຕົນໃຫ້ຫນ້ອຍລົງ.

## ການຕໍ່ຕ້ານການສໍ້ລາດບັງຫຼວງ::

HanesBrands ປະຕິບັດຕາມກົດຫມາຍທີ່ກ່ຽວຂ້ອງຢ່າງເຂັ້ມງວດ ລວມທັງກົດຫມາຍ Foreign Corrupt Practices Act ແລະ ກົດຫມາຍວ່າດ້ວຍສິນບົນ ຂອງສະຫະລາຊະອານາຈັກ (U.K. Bribery Act)ແລະ ຕ້ອງການໃຫ້ຜູ້ຈັດສົ່ງປະຕິບັດ ຕາມເຊັ່ນດຽວກັນ.
ຜູ້ຈັດສົ່ງຈະບໍ່ຈ່າຍສິນບົນ ຫຼື ມີສ່ວນກ່ຽວຂ້ອງໃນການທຸຈະລິດເພື່ອເພີ່ມພູນຜົນ ປະໂຫຍດທາງທຸລະກິດ ຂອງ HanesBrands.
ສິ່ງນີ້ລວມມ, ໂດຍທາງກົງ ຫຼື ທາງອ້ອມ, ການສະເຫນີ, ການໃຫ້ສັນຍາວ່າຈະຈ່າຍ ຫຼື ອະນຸມັດການຈ່າຍເງິນ ຫຼື ທຸກໆທີ່ເປັນມູນຄ່າແກ່ພະນັກງານລັດໃນທ້ອງຖິ່ນ, ພັກການ ເມືອງຕ່າງໆ, ຜູ້ສະຫມັກຕໍາແຫນ່ງການເມືອງ ຫຼື ບຸກຄົນເອກະຊົນເພື່ອມີອິດທິພົນຕໍ່ ການກະທໍາ ຫຼື ການຕັດສິນໃຈ ຂອງພະນັກງານຂອງລັດ ຫຼື ບຸກຄົນອື່ນໆ.



© 2022 Hanesbrands Inc. ສະຫງວນສິດ.